# ກົດໝາຍວ່າດ້ວຍການພັກວຽກຍ້ອນການເຈັບເປັນ ແລະເພື່ອຄວາມປອດໄພ

## ມີຫຍັງແດ່ໃນກົດໝາຍໃໝ່ນີ້?

- ເລີ່ມຕົ້ນເດືອນ 7 ວັນທີ່ 1 ປີ 2017 ເປັນຕົ້ນໄປ, ຜູ້ອອກຮາງງານຈະໄດ້ຮັບເວລາພັກວຽກຍ້ອນການເຈັບເປັນແລະເພື່ອຄວາມປອດໄພໜຶ່ງ ຊົ່ວໂມງຕໍ່ 30 ຊົ່ວໂມງຂອງການເຮັດວຽກ ແລະໃນຂະນະທີ່ພັກວຽກຍ້ອນການເຈັບເປັນແລະເພື່ອຄວາມປອດໄພນັ້ນ ກໍ່ຈະໄດ້ຮັບເງິນຕາມອັດຕາຄ່າແຮງງານແລະຜົນປະໂຫຍດຕາມປົກກະຕິ.
- ຜູ້ອອກແຮງງານສາມາດນໍາໃຊ້ເວລາຂອງການພັກວຽກຍ້ອນການເຈັບເປັນ ແລະ ເພື່ອຄວາມປອດໄພສໍາລັບຮັກສາສຸຂະພາບຂອງຕົນເອງ ແລະ ເພື່ອຮັກສາການເຈັບເປັນ, ການຖືກບາດເຈັບຫຼືສະພາວະສຸຂະພາບ; ຫລືເພື່ອການບົ່ງມະຕິ, ການດູແລ, ການປິ່ນປົວຫຼືການດູແລປ້ອງກັນການເຈັບເປັນຂອງສະມາຊິກຄອບຄົວບາງຄົນ.
- ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ, ການທາລຸນທາງເພດ, ແລະ ການສະກົດຕິດຕາມຫວັງປອງຮ້າຍສາມາດນໍາໃຊ້ ເວລາຂອງການພັກວຽກຍ້ອນການເຈັບເປັນແລະເພື່ອຄວາມປອດໄພສໍາລັບຮັບການປິ່ນປົວ ແລະການບໍລິການອື່ນໆທີ່ຈໍາເປັນ.
- ຜູ້ອອກແຮງງານສາມາດນໍາໃຊ້ເວລາຂອງການພັກວຽກຍ້ອນການເຈັບເປັນເພື່ອຢູ່ເຮືອນກັບລູກ ໃນກໍລະນີເວລາໂຮງຮຽນຖືກປິດແບບກະທັນຫັນຍ້ອນສາເຫດສຸກເສີນດ້ານສຸຂະພາບຫຼືສະພາບດິນຟ້າອາກາດ.

## ຜູ້ທີ່ຈະໄດ້ຮັບຜົນກະທົບ?

- ຜູ້ໃຊ້ແຮງງານທີ່ມີຜູ້ອອກແຮງງານຫົກຄົນຫຼືຫຼາຍກວ່າຫົກຄົນຂຶ້ນໄປທີ່ ຍັງບໍ່ມີການສະໜອງການພັກວຽກທີ່ສົມຄວນຫຼືຢ່າງເຕັມເມັດເຕັມໜ່ວຍຕ້ອງໄດ້ສະໜອງເວລາຂອງການພັກວຽກຍ້ອນການເຈັບເປັນ ແລະ ເພື່ອຄວາມປອດໄພໃຫ້ຜູ້ອອກແຮງງານໂດຍຕ້ອງຈ່າຍຄ່າແຮງງານຕາມປົກກະຕິ.
- ຜູ້ໃຊ້ແຮງງານທີ່ມີຜູ້ອອກແຮງງານໜ້ອຍກວ່າຫົກຄົນຕ້ອງໄດ້ສະໜອງເວລາຂອງການພັກວຽກຍ້ອນການເຈັບເປັນແລະເພື່ອຄວາມປອດໄພ; ທີ່ບໍ່ຈໍາເປັນຕ້ອງຈ່າຍຄ່າແຮງງານຕາມອັດຕາຄ່າແຮງງານກໍໄດ້.
- ຜູ້ອອກແຮງງານທີ່ເຮັດວຽກຢ່າງໜ້ອຍ 80 ຊົ່ວໂມງຕໍ່ປີພາຍໃນຂອບເຂດຂອງເມືອງ ມິນິແອັບໂປລິດ (Minneapolis) ສາມາດນໍາໃຊ້ເວລາຂອງການພັກວຽກຍ້ອນການເຈັບເປັນແລະເພື່ອຄວາມປອດໄພໄດ້.

## ວິທີການປະຕິບັດນໍາໃຊ້?

ຝ່າຍອໍານາດການປົກຄອງເມືອງມິນິແອັບໂປລິດ (Minneapolis) ຈະເປັນຜູ້ຈັດຕັ້ງປະຕິບັດການນໍາໃຊ້ໃນທຸກຂັ້ນຕອນ. ກົມວ່າດ້ວຍສິດທິພົນລະເຮືອນຈະເປັນຜູ້ສືບສວນການຟ້ອງຮ້ອງ ແຕ່ຈະແນໃສ່ການປະສານງານແລະພົວພັນຮ່ວມມືກັບຜູ້ໃຊ້ແຮງງານ. ການລົງໂທດອາດຈະແຕກຕ່າງກັນຕາມເງື່ອນໄຂທີ່ຈໍາເປັນເພື່ອໃຫ້ໄດ້ຮັບຄວາມຮ່ວມມື ແລະການປະຕິບັດຕາມ. ຫ້າມມີການແກ່ແຄ້ນຕໍ່ຜູ້ອອກແຮງງານຢ່າງເດັດຂາດ.

## ໃນອະນາຄົດຂ້າງໜ້າ

- ຜູ້ໃຊ້ແຮງງານຄວນເລີ່ມກະກຽມທົບທວນຄືນວິທີການຕິດຕາມແຮງງານ, ການບັນທຶກເກັບກໍາຂໍ້ມູນ ແລະນະໂຍບາຍການພັກວຽກ.
- ເຂົ້າເບິ່ງໃນເວັບໄຊ www.minneapolismn.gov/sicktimeinfo ເພື່ອເກັບເອົາຂໍ້ມູນເພີ່ມເຕີມ.
- ເຂົ້າຮ່ວມກອງປະຊຸມຟັງຫາງສຽງສາທາລະນະໃນລະດູໃບໄມ້ຫຼົ່ນທີ່ຈະມາເຖິງນີ້ຫຼືສົ່ງຄໍາເຫັນມາທາງອອນລາຍ.

ສໍາລັບຂໍ້ມູນເພີ່ມເຕີມ, ອ່ານຈາກ www.minneapolismn.gov/sicktimeinfo , ອີເມວ sicktimeinfo@minneapolismn.gov ຫຼືໂທຫາ.

June 2016